# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 24 ມັງກອນ 2010 (1-24-2010)

## ປັກປໍ້າກັບວັດຖຸສິ່ງຂອງຫຼາຍຢ່າງ

**ຂໍ້ພຣະຄັມພີໃນບົດຮຽນ:** ປັນຍາຈານ 4:4-8;5:10-16

### ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ

ບົດຮຽນນີ້ສາມາດປ່ຽນທິດທາງຂອງທ່ານໃນການເບິ່ງວັດຖຸສິ່ງຂອງທີ່ທ່ານເປັນເຈົ້າຂອງໂດຍການຊ່ວຍເຫຼືອທ່ານໃຫ້ລຽງລຳດັບບ່ອນທີ່ທ່ານສຸມກຳລັງ, ສິ່ງທີ່ທ່ານຄິດວ່າສຳຄັນ, ແລະສິ່ງທີ່ມີຄ່າຢ່າງແທ້ຈິງ.

### ບົດຮຽນນີ້ເວົ້າກ່ຽວກັບຫຍັງ

ບົດຮຽນນີ້ແມ່ນກ່ຽວກັບສະຖານທີ່ແລະອຳນາດຂອງວັດຖຸສິ່ງຂອງທີ່ທ່ານເປັນເຈົ້າຂອງໃນຊີວິດຂອງທ່ານ.

### ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ

ຄົນແລກປ່ຽນຊີວິດຂອງພວກເຂົາກັບສິ່ງທີ່ພວກເຂົາຊື້. ພວກເຂົາຕ້ອງຖາມວ່າສິ່ງທີ່ພວກເຂົາຊື້ມັນມີຄ່າສົມກັບເງິນທີ່ຈ່າຍໃນກຳນົດຂອບເຂດຂອງເວລາທີ່ພວກເຂົາໄດ້ໃຊ້ໄປສະສົມມັນ.

ຄຳຈາລຶກທີ່ຫີນເທິງຫຼູມຝັງສົບອ່ານວ່າ,"ລາວຕາຍເພາະສິ່ງທີ່ລາວຢາກໄດ້." ຄຳຈາລຶກຂອງຜົວລາວທີ່ຢູ່ຖັດມາອ່ານວ່າ,"ລາວຕາຍເພາະພຍາຍາມຫາສິ່ງເຫຼົ່ານັ້ນມາໃຫ້ເມັຽ" ຈຸດໝາຍນັ້ນກໍຄືວ່າຫຼາຍໆຄົນພາກັນໃຊ້ຊີວິດຂອງພວກເຂົາໃນການຕິດຕາມຫາວັດຖຸສິ່ງຂອງຕ່າງໆ. ທ່ານກໍຕົກໃນຂັ້ນອັນຕລາຍແນວນີ້ຫຼື? ໃຫ້ໃສ່ໃຈຕໍ່ຄຳຖາມຕໍ່ໄປນີ້ເພື່ອໃຫ້ໝັ້ນໃຈ: (1) ປົກກະຕິແລ້ວທ່ານເລືອກເອົາອັນໃດ, ລະຫວ່າງຢາກໄດ້ເພີ້ມຫຼືຄວາມເຄັ່ງຄັດກັບພຣະເຈົ້າ? (2) ທ່ານທຸ້ມເທເຫື່ອແຮງຫຼາຍສໍ່າໃດເພື່ອປ້ອງກັນຮັກສາສິ່ງຕ່າງໆທີ່ໄດ້ສະສົມເອົາໄວ້ນັ້ນ? (3) ທ່ານຮູ້ຈັກເສັ້ນສິ້ນສຸດຂອງຄວາມຈຳເປັນແລະຈຸດທີ່ເກີນກຳນົດໃນຊີວິດຂອງທ່ານບໍ່?

ບົດຮຽນນີ້ເວົ້າເຣື່ອງການເປັນເຈົ້າຂອງແຫ່ງວັດຖຸສິ່ງຂອງຕ່າງໆ-ວ່າທ່ານກັກຂັງພວກມັນແລະພວກມັນກັກຂັງທ່ານ. ພຣະເຈົ້າຕ້ອງການໃຫ້ທ່ານມອງເຫັນຄຸນຄ່າໃນຂອງທີ່ສາມາດມີຄ່າແລະຕິດຕາມສິ່ງທີ່ຕລອດໄປເປັນນິດ.

## ສຶກສາພຣະຄັມພີ

### 1.ຂ້າພະເຈົ້າມີຫຼາຍສິ່ງຫຼາຍຢ່າງ (ປັນຍາຈານ 2:4-8)

ໂຊໂລໂມນທົບທວນເບິ່ງຊີວິດຂອງລາວແລະນັບຮວບຮວມ"ສິ່ງຂອງຫຼວງຫຼາຍ"ທີ່ລາວມີ. ສິ່ງຂອງເຫຼົ່ານີ້**ໄດ້ເພີ້ມເຕີມຂຶ້ນ**ໃນການຕິດຕາມຄວາມຢາກໄດ້ວັດຖຸສິ່ງຂອງ. ເໝືອນດັ່ງທີ່ເດັກນ້ອຍອາດຈະເຮັດ, ກະສັດອົງຍິ່ງໃຫຍ່ຂອງອິສຣາເອນກໍມ່ວນຊື່ນລື້ນເລີງໃນການຫຼິ້ນກັບສິ່ງຂອງໆລາວເຊັ່ນກັນ. ແຕ່ວ່າ, ໃນຕອນທ້າຍ, ລາວມອງເຫັນວ່າການທີ່ພະຍາມຢາກໄດ້ສິ່ງຂອງມາຄອບຄອງມັນນຳຄວາມຍິນດີຫຼາຍກວ່າການທີ່ໄດ້ມັນມາຄອບຄອງແລ້ວ.

ສັງເກດເບິ່ງການດຶງດູດດ້ວຍຕົວເອງທີ່ໂຊໂລໂມນໄດ້ປະສົບໃນຕອນນີ້: ລາວສາຣະພາບເຖິງຫ້າເທື່ອກ່ຽວກັບການສແວງຫາວັດຖຸສິ່ງຂອງແມ່ນ**ເພື່ອຕົນເອງ.** ລາວໄດ້ໃຊ້ຄຳວ່າ *ຂ້າພະເຈົ້າ* ເຖິງແປດເທື່ອໃນພຣະທັມຫ້າຂໍ້. ເປົ້າ

ໝາຍຂອງໂຊໂລໂມນແມ່ນເພື່ອຮິບໂຮມສິ່ງຂອງ- ໂດຍທີ່ບໍ່ມີຫຍັງດີໄປກວ່ານັ້ນຫຼືເປົ້າໝາຍອື່ນອີກ.   ລາວຂາດການມອງເຫັນວ່າຄວາມຮັ່ງມີເປັນໂອກາດທີ່ຈະເປັນພຣະພອນສຳລັບຄົນອື່ນໆ, ໃນການແບ່ງປັນຢ່າງມີເສຣີພາບແລະບໍ່ຂີ້ຖີ່ຕໍ່ຜົນປໂຍດຂອງຄົນອື່ນທີ່ມີຄວາມອຶດຢາກ.

ໂຊໂລໂມນເວົ້າເຖິງ**ຄວາມສຳເຣັດຜົນ**ຂອງລາວ.  ມີຫຼາຍຄົນເຊື່ອວ່າການສແວງຫາຄວາມຮັ່ງມີເປັນຜົນເຮັດໃຫ້ມີຄວາມໝາຍແລະຕຳແໜ່ງ,   ຖ້າບຸກຄົນຫາກໍ່ສະແດງໃຫ້ເຫັນຄ່າຂອງຕົວເອງ. ພວກເຂົາຄິດວ່າສິ່ງຂອງສ່ວນຕົວເປັນຂໍ້ພິສູດຕົວພວກເຂົາ-ອີກຝ່າຍນຶ່ງກໍ່ສືບຕໍ່ເກັບຮັກສາຄອບຄອງ  ແລະເຮັດໃຫ້ຄົນອື່ນຢ້ານລື່ນນັ້ນສະແດງໃຫ້ເຫັນເຖິງຄວາມໃຫຍ່ຂອງບຸກຄົນ. ແລ້ວທ່ານເດ? ທ່ານໃຫ້ຄຸນຄ່າວັດຖຸສິ່ງຂອງເທົ່າກັບຄຸນຄ່າຂອງຕົວທ່ານບໍ່?

ຊັບສົມບັດຂອງໂຊໂລໂມນເປັນໜ້າສະອອນ. ລາວມີ**ເຮືອນ**ຫຼາຍຫຼັງ, ບ່ອນທີ່ລາວຢູ່ກໍ່ມີຫຼາຍບ່ອນ.  ຖ້າທຽບໃສ່ສມັຍປັດຈຸບັນກໍ່ຄົງຈະແມ່ນຜູ້ເປັນເຈົ້າຂອງສະຖານທີ່ພັກຜ່ອນອັນສວຍງາມ.  ໂຊໂລໂມນມີ**ສວນອະງຸ່ນຫຼາຍ**ພຽບພ້ອມດ້ວຍສີມືແລະຄວາມຊຳນານ.   ຄຸນປໂຍດອັນນີ້ກໍ່ຖືກນຳມາໃຊ້ໃນ**ສວນແລະເດີ່ນສາທາຣະນະຫຼາຍໆແຫ່ງ**ຂອງລາວຊຶ່ງເປັນບ່ອນທີ່**ລາວໄດ້ປູກຕົ້ນໝາກໄມ້ທຸກໆຊະນິດ**.   ສວນໝາກໄມ້ຊຶ່ງເປັນສັນຍາລັກເຖິງຄວາມມັ່ງມີໃນສມັຍບູຮານ; ໝາກໄມ້ກໍ່ມີລາຄາສູງອີກດ້ວຍ.

ຄຸນສົມບັດອັນນຶ່ງທີ່ເປັນກຸນແຈຂອງການຢາກເປັນເຈົ້າຂອງເໜືອວັດຖຸທີ່ຄົນໄດ້ຊອກຫາຄືຜົນປໂຍດຂອງມັນ. ພວກເຮົາຢາກໄດ້ສິ່ງທີ່ເຮັດໃຫ້ຊີວິດຂອງພວກເຮົາສະດວກຂຶ້ນກວ່າເກົ່າ. ຂນະທີ່ປ່ອງຢ້ຽມກໍ່ໃຊ້ພະລັງແບບອັດຕະໂນມັດຊຶ່ງເປັນຂອງແຖມອັນນຶ່ງໃນຣົດ, ດຽວນີ້ລວມທັງເຄື່ອງສາຍໜັງ, ລະບົບເຄື່ອງຊີ້ທາງ,  ແລະກ້ອງເພື່ອໃຫ້ເຫັນຍາມຖອຍຫຼັງ. ເມື່ອໂຊໂລໂມນໄດ້ກ່າວເຖິງວ່າລາວມີສະນ້ຳຫຼາຍອັນເພື່ອໃຊ້ນ້ຳຫົດຜົລປູກຂອງລາວ,    ນັ້ນແມ່ນລາວໄດ້ເຮັດໃຫ້ຄົນອື່ນຢ້ານລື່ນ.  ພວກເຮົາຫຼາຍຄົນບໍ່ສາມາດເຂົ້າໃຈຄວາມຮັ່ງມີໃນການມີນ້ຳເພື່ອເອົາໃຫ້ຄົນຢູ່ໃນເຂດແຫ້ງແລ້ງ.

ມີຊາຍທີ່ເຮັດດີຜູ້ນຶ່ງກຳລັງປະກອບເອກກະສານປະກັນພັຍ. ເມື່ອມາເຖິງແຖວທີ່ຖາມເຖິງລະດັບໜ້າທີ່ຮັບຜິດຊອບ, ລາວໄດ້ຂຽນວ່າ“ດີກ່ວາຄົນອື່ນ” ນີ້ກໍ່ເໝາະສົມກັບໂຊໂລໂມນເໝືອນກັນ.

ຄວາມຮັ່ງມີສ່ວນໃຫຍ່ແມ່ນວັດແທກໃນຂອບເຂດຂອງພວກທີ່ເຮັດວຽກໃຫ້ພວກເຮົາ  ແລະພວກທີ່ນຳຄວາມມ່ວນຊື່ນໃຫ້ກັບພວກເຮົາ. ໂຊໂລໂມນໄດ້ມີຄົນໃຊ້ຫຼາຍຄົນ, ມີພວກນັກຮ້ອງ,   ແລະນາງບຳເລີຫຼວງຫຼາຍສຳລັບການສັບປ່ຽນໃຊ້ສອຍຂອງລາວ, ຊຶ່ງທຸກຄົນລ້ວນແລ້ວແຕ່ໄດ້ນຳຄວາມຊົມຊື່ນແບບຊາວໂລກ. ວິຖີຊີວິດທີ່ມັ່ງຄັ່ງຢ່າງນີ້ອາດຈະເປັນເພາະວ່າເງິນແລະຄຳ(ເງິນສົດ)ຂອງລາວແລະຝູງສັດລ້ຽງ(ການເປັນເຈົ້າຂອງ).

ພວກເຮົາບໍ່ຕ້ອງລືມຄວາມໝາຍແທ້ທີ່ໂຊໂລໂມນກ່າວໃນທີ່ນີ້.    ພຣະທັມປັນຍາຈານບັນບະຍານເຖິງການຊອກຫາຄວາມໝາຍ, ຄົ້ນຄ້ວາສືບຫາສຳລັບເປົ້າໝາຍໃນຊີວິດ.  ບໍ່ມີວັດຖຸສິ່ງຂອງອັນໃດທີ່ໂຊໂລໂມນກ່າວເຖິງບໍ່ໄດ້ນຳຄວາມເພິ່ງພໍໃຈຫຼືຄວາມໝາຍອັນໃດມາໃຫ້ລາວໄດ້.   ຖ້າວ່າມັນບໍ່ພຽງພໍສຳລັບລາວແລ້ວ, ເປັນຫຍັງພວກເຮົາຍັງຄິດວ່າມັນຈະນຳບາງຢ່າງມາໃຫ້ພວກເຮົາຕື່ມ.

## 2. <u>**ຂ້າພະເຈົ້າຢາກໄດ້ເພີ້ມອີກ**</u> (ປັນຍາຈານ 5:10-14)

ພວກເຮົາຖືກຊັກຈູງໂດຍຄຳຊັກຊວນຂອງການໂຄສະນາຂອງສັງຄົມວ່າຖ້າໄດ້ວັດຖຸສິ່ງຂອງເພີ້ມຂຶ້ນຈະເຮັດໃຫ້ພວກເຮົາມີເສຣີພາບ. ຂນະທີ່ພວກເຮົາອາດຈະຄິດວ່າພວກເຮົາໄດ້ເສຣີພາບແລ້ວ, ຄວາມຈິງແລ້ວມັນບໍ່ແມ່ນເສຣີພາບພວກເຮົາພົບແຕ່ພຽງ“ໂລກຂອງຄວາມໂລບ”ເທົ່ານັ້ນເອງ. ຄຳຊັກຊວນອັນດຽວກັນນັ້ນທີ່ພະຍາຍາມປ່ຽນຄວາມຄິດຂອງພວກເຮົາວ່າສິ່ງຂອງຕ່າງໆແລະເງິນທີ່ຈະຊື້ພວກມັນມາຈະນຳຄວາມສຸກມາໃຫ້ພວກເຮົາ. ພຣະຄຳຂອງພຣະເຈົ້າບອກພວກເຮົາອີກແນວນຶ່ງ: **ຄົນຮັກເງິນຍ່ອມບໍ່ອີ່ມເງິນ ຄວາມຮັ່ງມີ**ແລະ**ລາຍໄດ້**ບໍ່ເຮັດໃຫ້ເຮົາມີຄວາມສຸກ.   ຄຳ

ຂວັນໃນພຣະທັມປັນຍາຈານທັງໝົດຄືການຊອກຫາຄວາມສຸກໃຫ້ຫຼາຍຂຶ້ນໃນວັດຖຸສິ່ງຂອງອັນຫຼວງຫຼາຍກໍໄຮ້ປໂຍດ. ການມີຊີວິດປະເພດນີ້ມັນກໍຫາຍວັບໄປເໝືອນລົມ.

ຕາບໃດທີ່ຄົນພວກນັ້ນຫາກຍັງຮັກກັບສິ່ງຕ່າງໆທີ່ຜິດຢູ່, ຫົວໃຈພວກເຂົາຈະບໍ່ພົບກັບຄວາມພໍໃຈຈັກເທື່ອ; ຄວາມສຸກເປັນເລື່ອງຂອງພາຍໃນ. ບໍ່ມີສິ່ງຂອງພາຍນອກແລະສິ່ງທໍາມະຊາດໃດໆທີ່ຈະນໍາຄວາມພໍໃຈອັນຍາວນານມາສູ່ຈິດໃຈຂອງພວກເຮົາໄດ້ຈັກເທື່ອ. ມີແຕ່ສາຍສໍາພັນກັບພຣະຜູ້ສ້າງຈັກກະວານໂດຍຜ່ານພຣະເຢຊູຄຣິດເທົ່ານັ້ນຈຶ່ງຈະສາມາດນໍາສັນຕິສຸກມາສູ່ພາຍໃນໄດ້.

ການເພີ້ມພູນຄວາມຮັ່ງມີບໍ່ພຽງແຕ່ຈະບໍ່ນໍາຄວາມສຸກມາໃຫ້ເທົ່ານັ້ນ, ມັນຍັງນໍາເຫດການທີ່ບໍ່ປາຖນາມາສູ່ເຈົ້າຂອງໆມັນອີກ. ເພື່ອນກິນທີ່ບໍ່ມີໃນເມື່ອກ່ອນກໍທະວີຫຼາຍຂຶ້ນ, ຫຸ້ມຫໍ່ຕອມ, ແລະເຜົາຜານສິ່ງຂອງໆທ່ານ. ຍາດຕິພີ່ນ້ອງແລະໝູ່ຄູ່ທີ່ທ່ານບໍ່ໄດ້ຮູ້ຈັກເມື່ອກ່ອນນັ້ນໃນທັນທີທັນໃດກໍຢາກເປັນເພື່ອນດີທີ່ສຸດຂອງທ່ານ. ພວກນັກເຊັ່ງທັງຫຼາຍກໍເຮັດໃຫ້ຜູ້ທີ່ເປັນເຈົ້າຊັບບໍ່ສາມາດຊົມຊື່ນຍິນດີກັບສິ່ງທີ່ເຂົາມີຢູ່. ເງິນສາມາດປ່ຽນແປງທຸກຢ່າງແຕ່ວ່າປົກກະຕິມັນບໍ່ປ່ຽນໃນທາງດີສເມີໄປ. ຜົນປໂຍດອັນແທ້ຈິງທີ່ໄດ້ຈາກການເພີ້ມພູນວັດຖຸສິ່ງຂອງກໍຄືມັນສາມາດຈາກໄປໄດ້.

ມັນມີສິ່ງທີ່ສາມາດຊື້ໄດ້ດ້ວຍເງິນແລະມີສິ່ງທີ່ເງິນບໍ່ສາມາດຊື້ໄດ້. ຕົວຢ່າງອັນນຶ່ງກໍຄືມີ**ເງິນຫຼວງຫຼາຍ**ສາມາດຊື້ຕຽງທີ່ໃຫ້ຄວາມນຸ້ມນວນໄດ້ແຕ່ບໍ່ສາມາດຊື້**ການນອນຫຼັບ**ຝັນດີໄດ້. ບາງຄົນທີ່ບໍ່ມີສິ່ງຂອງຫຼາຍເມື່ອກັບບ້ານຈາກການທໍາງານໜັກກໍສາມາດນອນພັກຜ່ອນຢ່າງຫຼັບສະບາຍຈໍາແຈ້ງ. ແຕ່ວ່າ, ຜູ້ທີ່ຮັ່ງມີກໍບໍ່ສາມາດພັກຜ່ອນໄດ້ເພາະເປັນຫ່ວງນໍາວັດຖຸສິ່ງຂອງໆຕົນ. ຕ້ອງໃຊ້ເວລາແລະກໍາລັງຫຼາຍໃນການທີ່ຈະທ້ອນຮິບໂຮມຊັບສົມບັດອັນຫຼວງຫຼາຍແຕ່ວ່າທີ່ຈະປ້ອງກັນຮັກສາບໍ່ໃຫ້ຄົນອື່ນມາລັກເອົາໄປນັ້ນແຫ່ງໃຊ້ຄວາມພະຍາຍາມຫຼາຍກວ່ານັ້ນອີກ. ບາງຄັ້ງກໍເກືອບຈະເປັນເໝືອນວ່າຈັກກະວານອັນນີ້ໄດ້ຫຼິ້ນຕະລົກອັນເຜັດແສບໃສ່ພວກທີ່ຖິ້ມຕົວພວກເຂົາເອງໃສ່ການຊອກຫາຊັບສິ່ງຂອງຫຼາຍຢ່າງ.

ຄວາມຄາດຄິດສຸດຍອດໃນການສແວງຫາຄວາມຮັ່ງມີກໍຄືມັນຈະນໍາຜົນປໂຍດແລະພຣະພອນມາສູ່ຊີວິດນຶ່ງ. ຂນະທີ່ມັນສາມາດເປັນໄປໄດ້, ສ່ວນຫຼາຍມັນປາກົດເໝືອນວ່າມັນຕິດຕາມທາງທີ່ແຕກຕ່າງກັນ. ໂຊໂລໂມນໄດ້ສັງເກດເຫັນວ່າ**ຄວາມຮັ່ງມີທີ່ມີການຮັກສາໂດຍເຈົ້າຂອງໆມັນ**ໄດ້ນໍາພັຍມາສູ່ຢ່າງແນ່ນອນ, ມັນບໍ່ໄດ້ຊ່ວຍ. ລາວຮ້ອງສິ່ງນີ້ວ່າ**ສິ່ງສາມານອັນໜ້າສລົດໃຈ**ແລະນັກສັງເກດການຊີວິດທີ່ສັດຊື່ຄົນອື່ນໆ ອີກ**ພາຍໃຕ້ດວງອາທິດ**ນີ້ກໍເຫັນພ້ອມກັບສະຕິປັນຍາຂອງໂຊໂລໂມນໃນຈຸດນີ້. ໂຊໂລໂມນຍັງໄດ້ຊີ້ໃຫ້ເຫັນການສູນຫາຍໄປທີ່ມີຈິງຂອງຄວາມຮັ່ງມີອີກດ້ວຍ. ຄໍາແນະນໍາບໍ່ດີອັນນຶ່ງ**ທີ່ໜ້າສ່ຽງ**ຂອງນັກທຸຣະກິດສາມາດເຮັດໃຫ້ຄົນຫາຍຍະນະ ແລະຍາກຈົນລົງຈົນເຖິງຂັ້ນທີ່ບໍ່ສາມາດຄໍ້າຊູຄອບຄົວໄດ້.

ບາງທີນີ້ມັນບໍ່ແມ່ນການບັງເອີນທີ່ພວກເຮົາເວົ້າເລື່ອງສິ່ງທີ່ເປັນຂອງພວກເຮົາ. ແຕ່ວ່າ, ຄໍາຖາມນັ້ນກໍຄືໃຜເປັນເຈົ້າຂອງກັນແນ້? ຕົວຢ່າງການມີສິ່ງຂອງຫຼວງຫຼາຍໃນຊີວິດປະຈໍາວັນເປີດເຜີຍໃຫ້ເຫັນວ່າສິ່ງຕ່າງໆເຫຼົ່ານັ້ນບໍ່ແມ່ນພວກເຮົາຄອບຄອງພວກມັນແຕ່ວ່າພວກມັນຄອບຄອງພວກເຮົາ.

## ລຽງລໍາດັບການຖວາຍຂອງຂ້າພະເຈົ້າ

ໃຫ້ຄະແນນຈາກ 1 ຫາ 5 ແມ່ນຫຍັງຄືສິ່ງສໍາຄັນກ່ວາໝູ່ທີ່ສຸດໃນການຖວາຍຂອງທ່ານ.

______ຖວາຍເພີ້ມລາຍການພິເສດໃນໂບດຂອງຂ້າພະເຈົ້າ

______ຊື້ອາຫານ, ບ່ອນຢູ່ອາສັຍ, ເຄື່ອງນຸ່ງຫົ່ມສໍາລັບຄອບຄົວຂອງຂ້າພະເຈົ້າ

______ຖວາຍສນັບສນູນສິ່ງທີ່ເປັນປໂຍດໃນກຸ່ມສັງຄົມ

______ຖວາຍນຶ່ງສ່ວນສິບໃຫ້ໂບດຂອງຂ້າພະເຈົ້າ

______ຖວາຍເປັນຂອງຂວັນໃຫ້ແກ່ຄອບຄົວແລະໝູ່ເພື່ອນ

### 3. <u>ຂ້າພະເຈົ້າບໍ່ຢາກພາກຈາກສິ່ງຂອງຕ່າງໆຂອງຂ້າພະເຈົ້າ</u> (ປັນຍາຈານ 5:15-16)

ໃນເດືອນ 11 ຂອງປີ 1997, ເກັຽຂອງຕືນຍົນບໍ່ຍ່ອນລົງເມື່ອຍົນຈະລົງທີ່ຊາຣ໌ແລັດ ລັດ ນອດແຄໂຣຣາຍນາ. ພວກຜູ້ໂດຍສານຖືກສັ່ງໃຫ້ອອກຈາກຍົນຈາກທາງອອກສຸກເສີນໂດຍດ່ວນ, ທີ່ມີການຊັກຊ້າກໍເພາະວ່າມີຜູ້ໂດຍສານຫຼາຍຄົນຍັງໃຊ້ເວລາຄ້ວາຫາກະເປົາທີ່ຢູ່ຕູ້ເທິງຫົວກ່ອນຈະອອກຈາກຍົນ. ແມ່ນຫຍັງຄືສິ່ງທີ່ຕິດທ້ອຍພວກເຮົາຢູ່ຖ້າວ່າພວກເຮົາຫາກຈ່ອງນ່ວງນ່ຽວພວກມັນແມ້ກະທັ້ງເມື່ອຕົກຢູ່ໃນຂັ້ນອັນຕລາຍ?

ເຖິງແມ່ນວ່າການເປັນເຈົ້າຂອງວັດຖຸສິ່ງຂອງແລະຮັ່ງມີອາດຈະນໍາຄວາມພໍໃຈໃນຊີວິດນີ້, ໂຊໂລໂມນໄດ້ເຂົ້າໃຈວ່າພວກມັນບໍ່ອາດສາມາດລອດພົ້ນໄປຫາຊີວິດໜ້າໄດ້. ເໝືອນດັ່ງເຂົາໄດ້ຄອດອອກຈາກທ້ອງມານດາຕົວເປືອຍກາຍສັນໃດ ເຂົາຈະກັບໄປອີກເຊັ່ນດຽວກັນສັນນັ້ນ. ບໍ່ວ່າຈະທຸ້ມເທຄວາມພະຍາຍາມທັງໝົດຂອງພວກເຮົາ, ພວກເຮົາກໍບໍ່ສາມາດຖືສິ່ງໃດຕິດມືເຂົ້າໄປໃນຝ່າຍຕລອດໄປເປັນນິດໄດ້.

ການບົກບືນຢາກໄດ້ວັດຖຸສິ່ງຂອງອາດຈະສົມທຽບໃສ່ກັບການໄລ່ຕິດຕາມລົງ. ຂັ້ນສິ້ນສຸດໃນການຕິດຕາມທາງນີ້ແມ່ນບໍ່ໄດ້ຫຍັງເພີ້ມເຕີມ. ຫຼັງຈາກທີ່ຮູ້ຢ່າງນີ້ແລ້ວເປັນຫຍັງພວກເຮົາຈຶ່ງຈະເສັຽເວລາແລະກໍາລັງ, ແມ້ວ່າຈະຍອມສະລະສິ່ງສໍາຄັນແຫ່ງຊີວິດທີ່ເປັນສາຍສໍາພັນຕໍ່ສິ່ງທີ່ບໍ່ຍືນຍົງຖາວອນ. ສະຕິປັນຍາໄດ້ແນະນໍາພວກເຮົາໃຫ້ຫຼີກເວັ້ນຈາກສິ່ງສາມານອັນໜ້າສລົດໃຈ.

## <u>ບົດຮຽນຊີວິດ</u>

ມັນມີຂໍ້ມູນຢູ່ໃນຕົວໂດຍບໍ່ຕ້ອງຫາແນວພິສູດອີກ ຄືເງິນເປັນສິ່ງຈໍາເປັນສໍາລັບຊີວິດ. ບໍ່ມີຜູ້ໃດຈະຖຽງໄດ້, ຊຶ່ງຮວມທັງຕົວໂຊໂລໂມນເອງ. ເຖິງຢ່າງໃດກໍຕາມ, ພວກເຮົາສາມາດຕົກຢູ່ໃນບ້ວງຂອງຄວາມໂລບມາກໂລພາແລະຊີວິດຂອງພວກເຮົາກໍຖືກບັນຊາໃຫ້ຕິດຕາມຫາວັດຖຸສິ່ງຂອງຕ່າງໆ. ສ່ວນອຽງໄປທາງທີ່ຈະໄດ້ກໍາໄລໃນການລົງທຶນເພື່ອຈະໃຫ້ຮັ່ງມີນັ້ນມັນມີຂອບເຂດຈໍາກັດ; ສ່ວນອຽງໄປທາງອັນຕລາຍມັນໃຫຍ່ກ່ວານັ້ນ.

ພວກເຮົາຄວນຈະເຮັດຢ່າງໃດກ່ຽວກັບເຣື່ອງນີ້? ນີ້ຄືຄໍາແນະນໍາບາງຢ່າງເພື່ອຫຼີກເວັ້ນຈາກການຕົກເຂົ້າໃນບ້ວງຂອງວັດຖຸສິ່ງຂອງ:

- ❖ ສໍາຫຼວດເບິ່ງການໃຊ້ເວລາໃນການຮັກສາໃຫ້ມັນຢູ່ໃນລະດັບເກົ່າແລະການປ້ອງກັນວັດຖຸສິ່ງຂອງໆທ່ານ.
- ❖ ໄຈ້ແຍກລະຫວ່າງຄວາມຈໍາເປັນຕ້ອງມີແລະຄວາມຢາກໄດ້ຂອງທ່ານແລະຄົ້ນຫາຈຸດທີ່ຈໍາເປັນຕ້ອງຈົບແລະບ່ອນເລີ້ມຕົ້ນຂອງຄວາມຟຸມເຟືອຍ.
- ❖ ທົບທວນຝ່າຍການເງິນຂອງທ່ານໂດຍໃຊ້ການຕັ້ງຄວາມຄິດໃສ່ສິ່ງຕລອດໄປເປັນນິດໂດຍຖວາຍຊັບສິນບັດບາງພາກສ່ວນຫຼືທັງໝົດເລີຍສໍາລັບວຽກຮັບໃຊ້ພຣະເຈົ້າ.
- ❖ ສໍາພາດພວກຄົນທີ່ໃກ້ຊິດວ່າກິຣິຍາແລະການປະພຶດຂອງທ່ານຕໍ່ພວກເຂົາເຣື່ອງວັດຖຸສິ່ງຂອງມັນໄດ້ສະທ້ອນແນວໃດຕໍ່ສາຍສໍາພັນກັບພວກເຂົາ.
- ❖ ພິຈາຣະນາລະບົບການຊື້ຂອງທ່ານວ່າການໄປເລາະຊື້ຂອງຕາມຮ້ານຄ້າຕ່າງໆມັນຍົກລະດັບຈິດວິນຍານຂອງທ່ານຂຶ້ນຫຼືບໍ່.